ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 001 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20 ມີນາ 2018

# ລັດຖະບັນຍັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍ ການໃຫ້ອະໄພຍະໂທດ**

- ອີງຕາມ ມາດຕາ 67 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 20 ກຸມພາ 2015.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ:**

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລັດຖະບັນຍັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໃຫ້ອະໄພຍະໂທດມີປະສິດທິພາບ, ຮັບປະກັນນະໂຍບາຍມະນຸດສະທຳ, ເພື່ອສຶກສາອົບຮົມ ນັກໂທດ ໃຫ້ເຫັນໄດ້ແນວທາງນະໂຍບາຍອັນຖືກຕ້ອງເປັນທຳຂອງລັດ ແຫ່ງ ສປປ ລາວກໍ່ສ້າງຕົນເອງໃຫ້ກາຍເປັນ ພົນລະເມືອງດີຂອງຊາດ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂ ໃຫ້ມີການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການໃຫ້ອະໄພຍະໂທດ**

ການໃຫ້ອະໄພຍະໂທດ ແມ່ນ ການປະຕິບັດນະໂຍບາຍມະນຸດສະທຳ ດ້ວຍການຫຼຸດຜ່ອນໂທດ ແລະ ປ່ອຍຕົວ ນັກໂທດ ໂດຍປະທານປະເທດ ໃນວັນສຳຄັນຂອງຊາດ ເປັນຕົ້ນ ວັນຊາດທີ 2 ທັນວາ ຍົກເວັ້ນນັກໂທດທີ່ຖືກລົງໂທດ ປະຫານຊີວິດ ແມ່ນໃຫ້ປະຕິບັດນະໂຍບາຍດັ່ງກ່າວ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນປະທານປະເທດ ອອກ ລັດຖະດຳລັດ ເປັນຕົ້ນໄປ.

**ມາດຕາ 3 ນະໂຍບາຍ ກ່ຽວກັບການໃຫ້ອະໄພຍະໂທດ**

ລັດ ສ້າງເງື່ອນໄຂອໍານວຍ ໃຫ້ແກ່ວຽກງານໃຫ້ອະໄພຍະໂທດ ດ້ວຍການວາງນະໂຍບາຍ, ລະບຽບການ, ການສະໜອງງົບປະມານ, ການປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ ເພື່ອເຮັດໃຫ້ວຽກງານດັ່ງກ່າວດໍາເນີນໄປດ້ວຍຄວາມຖືກຕ້ອງ, ໂປ່ງໃສ ແລະ ຮັບປະກັນຄວາມຍຸຕິທໍາໃນສັງຄົມ.

ລັດ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມກົດໝາຍ, ລະບຽບການ ໃຫ້ພົນລະເມືອງ ແລະ ນັກໂທດ ຮັບຮູ້, ເຂົ້າໃຈ, ເຄົາລົບ, ປະຕິບັດໃຫ້ຖືກຕ້ອງ ຢ່າງເຂັ້ມງວດ.

**ມາດຕາ 4 ຫຼັກການກ່ຽວກັບການໃຫ້ອະໄພຍະໂທດ**

ການໃຫ້ອະໄພຍະໂທດ ດໍາເນີນບົນພື້ນຖານຫຼັກການຕົ້ນຕໍ ດັ່ງນີ້:

1. ປະຕິບັດຕາມ ລັດຖະທໍາມະນູນ ແລະ ກົດໝາຍ ຂອງ ສປປ ລາວ;
2. ຮັບປະກັນ ຄວາມຍຸຕິທໍາ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ;
3. ຮັບປະກັນ ຄວາມມີມະນຸດສະທໍາ;
4. ຮັບປະກັນ ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
5. ຮັບປະກັນ ລະບອບລວມສູນເປັນເອກະພາບ;
6. ຮັບປະກັນ ການປະພຶດຕົວທີ່ດີຂອງນັກໂທດ.

**ມາດຕາ 5 ຂອບເຂດການນໍາໃຊ້**

ລັດຖະບັນຍັດສະບັບນີ້ ນໍາໃຊ້ສໍາລັບນັກໂທດ ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບເກີນກວ່າ ສາມປີ ຫາ ຊາວປີ, ໂທດຕັດອິດສະລະພາບຕະຫຼອດຊີວິດ ແລະ ໂທດປະຫານຊີວິດ ໂດຍມີການຮ້ອງຂໍອະໄພຍະໂທດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 39 ຂອງລັດຖະບັນຍັດສະບັບນີ້.

## ພາກທີ II
## ປະເພດ ແລະ ເງື່ອນໄຂຂອງການໃຫ້ອະໄພຍະໂທດ
### ໝວດທີ 1
### ປະເພດການໃຫ້ອະໄພຍະໂທດ

**ມາດຕາ 6 ປະເພດການໃຫ້ອະໄພຍະໂທດ**

ການໃຫ້ອະໄພຍະໂທດ ມີ ສອງ ປະເພດ ດັ່ງນີ້:

1. ການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ;
2. ການໃຫ້ອະໄພຍະໂທດ ປ່ອຍຕົວ.

**ມາດຕາ 7 ການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ**

ການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ ແມ່ນການປະຕິບັດນະໂຍບາຍ ຫຼຸດຜ່ອນໂທດ ໃຫ້ແກ່ນັກໂທດຜູ້ທີ່ປະພຶດດີ, ມີຄວາມກ້າວໜ້າ ໃນການຝຶກຝົນຫຼໍ່ຫຼອມຕົນເອງ, ປະຕິບັດລະບຽບຄ້າຍຄຸມຂັງ-ດັດສ້າງ ແລະ ອອກແຮງງານດີ, ມີການປ່ຽນແປງທາງດ້ານທັດສະນະແນວຄິດ ແລະ ມີຄວາມສໍານຶກຜິດ, ຮູ້ສຶກກິນແໜງຕໍ່ການກະທໍາທີ່ບໍ່ຖືກຕ້ອງຂອງຕົນໃນໄລຍະຜ່ານມາ ຊຶ່ງຈະໄດ້ຮັບການພິຈາລະນາຫຼຸດຜ່ອນໂທດ ຕາມເງື່ອນໄຂທີ່ກໍານົດໄວ້ໃນ ມາດຕາ 9, 10 ແລະ 11 ຂອງລັດຖະບັນຍັດສະບັບນີ້.

ສໍາລັບນັກໂທດທີ່ໄດ້ຮັບອະໄພຍະໂທດ ຫຼຸດຜ່ອນໂທດມາແລ້ວ ກໍຍັງມີສິດໄດ້ຮັບການພິຈາລະນາໃຫ້ອະໄພຍະໂທດ ຕື່ມອີກຕາມທີ່ໄດ້ກໍານົດໄວ້ໃນ ລັດຖະບັນຍັດສະບັບນີ້.

**ມາດຕາ 8 ການໃຫ້ອະໄພຍະໂທດ ປ່ອຍຕົວ**

ການໃຫ້ອະໄພຍະໂທດປ່ອຍຕົວ ແມ່ນການປະຕິບັດນະໂຍບາຍ ປ່ອຍຕົວນັກໂທດຜູ້ທີ່ເປັນແບບຢ່າງ ຊຶ່ງມີການປະພຶດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ຂອງລັດຖະບັນຍັດສະບັບນີ້ ກ່ອນໝົດກໍານົດເວລາປະຕິບັດໂທດ.

ນັກໂທດທີ່ໄດ້ຮັບອະໄພຍະໂທດ ປ່ອຍຕົວ ມອບໃຫ້ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງສືບຕໍ່ ສຶກສາອົບຮົມ ເພື່ອໃຫ້ກາຍເປັນພົນລະເມືອງດີຂອງສັງຄົມ.

## ໝວດທີ 2
## ເງື່ອນໄຂການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ ແລະ ປ່ອຍຕົວ

**ມາດຕາ 9 ເງື່ອນໄຂການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ ແກ່ນັກໂທດທີ່ຖືກລົງໂທດຕັດອິດສະລະພາບເກີນ ກວ່າ ສາມປີ ຫາ ຊາວປີ**

ນັກໂທດ ທີ່ຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສາມປີ ຫາ ຊາວປີ ຈະໄດ້ຮັບການພິຈາລະນາ ອະໄພຍະໂທດ ຫຼຸດຜ່ອນໂທດ ຕ້ອງມີເງື່ອນໄຂ ຄົບຖ້ວນດັ່ງນີ້:

1. ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງ ປະເພດ 1 ຫຼື ປະເພດ 2;
2. ໄດ້ປະຕິບັດໂທດມາແລ້ວ ໜຶ່ງສ່ວນສາມ ຂອງໂທດຕັດອິດສະລະພາບທັງໝົດ ສໍາລັບຜູ້ມີອາຍຸຕໍ່າກວ່າສິບແປດປີ ຫຼື ເກີນກວ່າ ຫົກສິບປີ ໃນເວລາກະທໍາຜິດ ແລະ ໄດ້ປະຕິບັດໂທດມາແລ້ວເຄິ່ງໜຶ່ງ ຂອງໂທດຕັດອິດສະລະພາບທັງໝົດ ສໍາລັບຜູ້ມີອາຍຸແຕ່ ສິບແປດປີ ຫາ ຫົກສິບປີ;
3. ໄດ້ຊໍາລະຄ່າປັບໃໝ ແຕ່ສາມສ່ວນຮ້ອຍ ຂຶ້ນໄປຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງ ແຕ່ສິບສ່ວນຮ້ອຍ ຂຶ້ນໄປ ຂອງຈໍານວນຄ່າເສຍຫາຍທາງແພ່ງທີ່ຍັງເຫຼືອກ່ອນການໃຫ້ອະໄພຍະໂທດແຕ່ລະຄັ້ງ ໂດຍມີໃບບິນ ຈ່າຍ-ຮັບເງິນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຍົກເວັ້ນຜູ້ທຸກຍາກທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ຢ່າງຖືກຕ້ອງ;
4. ບໍ່ເປັນຜູ້ກະທໍາຜິດທີ່ບໍ່ເຂັດຫຼາບ ຫຼື ບໍ່ເປັນຕົວການ ຫຼື ບໍ່ເປັນຜູ້ກະທໍາຜິດທີ່ໂຫດຮ້າຍປ່າເຖື່ອນ.

**ມາດຕາ 10 ເງື່ອນໄຂການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດແກ່ນັກໂທດທີ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ**

ນັກໂທດທີ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຈະໄດ້ຮັບການພິຈາລະນາອະໄພຍະໂທດ ຫຼຸດຜ່ອນໂທດຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງປະເພດ 1 ຫຼື ປະເພດ 2;
2. ໄດ້ປະຕິບັດໂທດມາແລ້ວ ສິບປີຂຶ້ນໄປ;
3. ໄດ້ຊໍາລະຄ່າປັບໃໝ ແຕ່ສາມສ່ວນຮ້ອຍ ຂຶ້ນໄປຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ແລະ ໃຊ້ແທນຄ່າ ເສຍຫາຍທາງແພ່ງແຕ່ ສິບສ່ວນຮ້ອຍ ຂຶ້ນໄປຂອງຈໍານວນຄ່າເສຍຫາຍທາງແພ່ງທີ່ຍັງເຫຼືອ ຍົກເວັ້ນຜູ້ທຸກຍາກ ທີ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ຫຼື ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ຢ່າງຖືກຕ້ອງ;
4. ບໍ່ເປັນຜູ້ກະທໍາຜິດທີ່ບໍ່ເຂັດຫຼາບ ຫຼື ບໍ່ເປັນຕົວການ ຫຼື ບໍ່ເປັນຜູ້ກະທໍາຜິດທີ່ໂຫດຮ້າຍປ່າເຖື່ອນ;

ສໍາລັບນັກໂທດ ທີ່ໄດ້ຮັບອະໄພຍະໂທດ ຫຼຸດຜ່ອນໂທດຕັດອິດສະລະພາບຕະຫຼອດຊີວິດມາເປັນໂທດຕັດອິດສະລະພາບໂດຍມີກໍານົດ ຊາວປີ ຈະໄດ້ຮັບການພິຈາລະນາອະໄພຍະໂທດ ຫຼຸດຜ່ອນໂທດ ຕື່ມອີກຄືກັນກັບນັກໂທດຕັດອິດສະລະພາບທີ່ມີກໍານົດເມື່ອນັກໂທດຜູ້ນັ້ນຫາກໄດ້ປະຕິບັດໂທດມາແລ້ວສິບຫ້າປີນັບແຕ່ມື້ຖືກກັກຕົວ.

**ມາດຕາ 11 ເງື່ອນໄຂ ການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ ແກ່ນັກໂທດທີ່ຖືກລົງໂທດປະຫານຊີວິດ**

ນັກໂທດ ທີ່ຖືກລົງໂທດປະຫານຊີວິດ ຈະໄດ້ຮັບການພິຈາລະນາ ອະໄພຍະໂທດ ຫຼຸດຜ່ອນໂທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ບໍ່ເປັນຜູ້ກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ບໍ່ເປັນຫົວການ ຫຼື ບໍ່ເປັນຜູ້ກະທຳຜິດ ທີ່ໂຫດຮ້າຍປ່າເຖື່ອນ.
2. ມີຄຳຊີ້ຂາດຂອງປະທານສານປະຊາຊົນສູງສຸດ ໃຫ້ປະຫານຊີວິດ;

ສຳລັບຜູ້ທີ່ມີຄຸນງາມຄວາມດີ, ມີຜົນງານໂດດເດັ່ນຕໍ່ປະເທດຊາດ ໂດຍມີການຢັ້ງຢືນຢ່າງຖືກຕ້ອງຈະເປັນເງື່ອນໄຂໜຶ່ງທີ່ສຳຄັນໃນການພິຈາລະນາໃຫ້ອະໄພຍະໂທດ.

**ມາດຕາ 12 ເງື່ອນໄຂການໃຫ້ອະໄພຍະໂທດປ່ອຍຕົວ**

ນັກໂທດ ທີ່ຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສາມປີ ຫາ ຊາວປີ ຈະໄດ້ຮັບອະໄພຍະໂທດ ປ່ອຍຕົວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ໂທດທີ່ຍັງເຫຼືອປະຕິບັດແຕ່ໜຶ່ງປີ ລົງມາ ສຳລັບຜູ້ຖືກລົງໂທດ ເກີນກວ່າ ສາມປີ ຫາ ສິບປີ;
2. ໂທດທີ່ຍັງເຫຼືອປະຕິບັດແຕ່ສອງປີ ລົງມາ ສຳລັບຜູ້ຖືກລົງໂທດ ເກີນກວ່າ ສິບປີ ຫາ ຊາວປີ;
3. ນັກໂທດ ທີ່ມີອາຍຸ ສູງກວ່າ ຫົກສິບປີ ໃນເວລາກະທຳຜິດທີ່ໄດ້ປະຕິບັດໂທດມາແລ້ວ ເຄິ່ງໜຶ່ງ;
4. ມີຄວາມກ້າວໜ້າ ຝຶກຝົນຫຼໍ່ຫຼອມຕົນເອງປະເພດ 1 ຫຼື ປະເພດ 2;

ສຳລັບນັກໂທດ ທີ່ມີເງື່ອນໄຂ ທີ່ກ່າວມາຂ້າງເທິງນັ້ນຕ້ອງໄດ້ຊຳລະຄ່າປັບໃໝແຕ່ຫ້າສ່ວນຮ້ອຍຂຶ້ນໄປຂອງຈຳນວນຄ່າປັບໃໝທີ່ຍັງເຫຼືອ ແລະ ຊຳລະຄ່າເສຍຫາຍທາງແພ່ງ ແຕ່ສິບສ່ວນຮ້ອຍ ຂຶ້ນໄປຂອງຈຳນວນຄ່າເສຍຫາຍທາງແພ່ງທີ່ຍັງເຫຼືອ ຍົກເວັ້ນຜູ້ທຸກຍາກ ທີ່ມີການຢັ້ງຢືນຢ່າງຖືກຕ້ອງ. ສຳລັບການຊຳລະຄ່າປັບໃໝ ແລະ ການໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຍັງເຫຼືອນັ້ນມອບໃຫ້ຫ້ອງການ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານສືບຕໍ່ປະຕິບັດຈົນຄົບຖ້ວນ.

ສຳລັບນັກໂທດທີ່ກະທຳຜິດຕໍ່ຄວາມສະຫງົບຂອງຊາດ ຫຼື ເປັນຜູ້ກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນຫົວການ ຫຼື ເປັນຜູ້ກະທຳຜິດ ທີ່ໂຫດຮ້າຍປ່າເຖື່ອນຈະບໍ່ໄດ້ຮັບການໃຫ້ອະໄພຍະໂທດປ່ອຍຕົວ.

## ພາກທີ III
## ການຫຼຸດຜ່ອນໂທດ ແລະ ການປ່ອຍຕົວ
### ໝວດທີ 1
### ການຫຼຸດຜ່ອນໂທດ

**ມາດຕາ 13 ການຫຼຸດຜ່ອນໂທດ ໃຫ້ແກ່ນັກໂທດ ທີ່ຖືກລົງໂທດຕັດອິດສະລະພາບ ເກີນກວ່າ ສາມປີ ຫາ ຊາວປີ**

ນັກໂທດທີ່ຖືກລົງໂທດຕັດອິດສະລະພາບເກີນກວ່າ ສາມປີ ຫາ ຊາວປີ ຊຶ່ງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ ໑ ຂອງລັດຖະບັນຍັດນີ້ໃຫ້ຫຼຸດຜ່ອນໂທດ ຕາມການກະທຳຜິດ ດັ່ງນີ້:

**1. ການກະທຳຜິດກ່ຽວກັບຄະດີທົ່ວໄປ:**

- ນັກໂທດ ທີ່ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງປະເພດ 1 ໃຫ້ຫຼຸດຜ່ອນໂທດ ຕັດອິດສະລະພາບ ສິບສອງ ເດືອນ ແລະ ຖ້າຫາກໄດ້ຊຳລະຄ່າປັບໃໝ ສາມສ່ວນຮ້ອຍຂອງຈຳນວນຄ່າປັບໃໝທີ່ຍັງເຫຼືອໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງຈຳນວນຄ່າປັບໃໝທີ່ຍັງເຫຼືອນັ້ນ, ຖ້າຫາກຊຳລະຄ່າປັບໃໝ ເກີນກວ່າ ສາມສ່ວນຮ້ອຍຂອງຈຳນວນຄ່າປັບໃໝທີ່ຍັງເຫຼືອໃຫ້ຫຼຸດຜ່ອນໂທດປັບໃໝ ຫ້າສ່ວນຮ້ອຍ ຂອງຈຳນວນຄ່າປັບໃໝທີ່ຍັງເຫຼືອນັ້ນ;

- ນັກໂທດ ທີ່ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງປະເພດ 2 ໃຫ້ຫຼຸດຜ່ອນໂທດຕັດອິດສະລະພາບ ເກົ້າ ເດືອນ ແລະ ຖ້າຫາກໄດ້ຊໍາລະຄ່າປັບໃໝ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ, ຖ້າຫາກຊໍາລະຄ່າປັບໃໝ ເກີນກວ່າສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອໃຫ້ຫຼຸດຜ່ອນໂທດປັບໃໝ ສີ່ສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ.

ສໍາລັບ ນັກໂທດທີ່ທຸກຍາກທີ່ມີການຢັ້ງຢືນ ຈາກອົງການປົກຄອງ ບ້ານ ຫຼື ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງຢ່າງຖືກຕ້ອງ ຜູ້ທີ່ມີຜົນງານໃນການດັດສ້າງປະເພດ 1 ໃຫ້ຫຼຸດຜ່ອນຄ່າປັບໃໝ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ, ສ່ວນຜູ້ທີ່ຜົນງານໃນການດັດສ້າງປະເພດ 2 ໃຫ້ຫຼຸດຜ່ອນຄ່າປັບໃໝ ສອງສ່ວນຮ້ອຍຂອງຈານວນຄ່າປັບໃໝທີ່ຍັງເຫຼືອ.

**2. ການກະທໍາຜິດກ່ຽວກັບຄະດີຢາເສບຕິດ:**

- ນັກໂທດ ທີ່ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງ ປະເພດ 1 ໃຫ້ຫຼຸດຜ່ອນໂທດຕັດອິດສະລະພາບ ເກົ້າ ເດືອນ ແລະ ຖ້າຫາກຊໍາລະຄ່າປັບໃໝ ສາມສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ, ຖ້າຫາກຊໍາລະຄ່າປັບໃໝ ເກີນກວ່າ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ໃຫ້ຫຼຸດຜ່ອນໂທດປັບໃໝ ຫ້າສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ;
- ນັກໂທດ ທີ່ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງ ປະເພດ 2 ໃຫ້ຫຼຸດຜ່ອນໂທດຕັດອິດສະລະພາບ ຫົກ ເດືອນ ແລະ ຖ້າຫາກຊໍາລະຄ່າປັບໃໝສາມສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ, ຖ້າຫາກຊໍາລະຄ່າປັບໃໝ ເກີນກວ່າ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ ໃຫ້ຫຼຸດຜ່ອນໂທດປັບໃໝ ສີ່ສ່ວນຮ້ອຍ ຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອນັ້ນ.

ສໍາລັບ ນັກໂທດທີ່ທຸກຍາກທີ່ມີການຢັ້ງຢືນ ຈາກອົງການປົກຄອງ ບ້ານ ຫຼື ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງຢ່າງຖືກຕ້ອງ ຜູ້ທີ່ມີຜົນງານໃນການດັດສ້າງປະເພດ 1 ໃຫ້ຫຼຸດຜ່ອນຄ່າປັບໃໝ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ, ສ່ວນຜູ້ທີ່ມີຜົນງານໃນການດັດສ້າງປະເພດ 2 ໃຫ້ຫຼຸດຜ່ອນຄ່າປັບໃໝ ສອງສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ.

**ມາດຕາ 14 ການຫຼຸດຜ່ອນໂທດ ໃຫ້ແກ່ນັກໂທດທີ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ**

ນັກໂທດທີ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດຊຶ່ງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 10 ຂອງລັດຖະບັນຍັດ ສະບັບນີ້ ໃຫ້ຫຼຸດຜ່ອນໂທດ ລົງມາເປັນໂທດຕັດອິດສະລະພາບ ຊາວປີ ແລະ ຖ້າຫາກມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງ ປະເພດ 1 ແລະ ໄດ້ຊໍາລະຄ່າປັບໃໝ ສາມສ່ວນຮ້ອຍ ໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງມູນຄ່າປັບໃໝທັງໝົດ, ຖ້າຫາກຊໍາລະຄ່າປັບໃໝ ເກີນກວ່າ ສາມສ່ວນຮ້ອຍ ໃຫ້ຫຼຸດຜ່ອນໂທດປັບໃໝ ຫ້າສ່ວນຮ້ອຍ ຂອງມູນຄ່າປັບໃໝທັງໝົດ.

ນັກໂທດ ທີ່ມີຄວາມກ້າວໜ້າໃນການຝຶກຝົນຫຼໍ່ຫຼອມຕົນເອງ ປະເພດ 2 ຖ້າຫາກຊໍາລະຄ່າປັບໃໝ ສາມສ່ວນຮ້ອຍ ໃຫ້ຫຼຸດຜ່ອນໂທດປັບໃໝ ສາມສ່ວນຮ້ອຍ ຂອງມູນຄ່າປັບໃໝທັງໝົດ, ຖ້າຫາກຊໍາລະຄ່າປັບໃໝ ເກີນກວ່າ ສາມສ່ວນຮ້ອຍໃຫ້ຫຼຸດຜ່ອນໂທດປັບໃໝ ສີ່ສ່ວນຮ້ອຍ ຂອງມູນຄ່າປັບໃໝທັງໝົດ.

ສໍາລັບ ນັກໂທດທີ່ທຸກຍາກທີ່ມີການຢັ້ງຢືນ ຈາກອົງການປົກຄອງ ບ້ານ ຫຼື ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງຢ່າງຖືກຕ້ອງ ຜູ້ທີ່ມີຜົນງານໃນການດັດສ້າງປະເພດ 1 ໃຫ້ຫຼຸດຜ່ອນຄ່າປັບໃໝ ສາມສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ, ສ່ວນຜູ້ທີ່ມີຜົນງານໃນການດັດສ້າງປະເພດ 2 ໃຫ້ຫຼຸດຜ່ອນຄ່າປັບໃໝ ສອງສ່ວນຮ້ອຍຂອງຈໍານວນຄ່າປັບໃໝທີ່ຍັງເຫຼືອ.

**ມາດຕາ 15 ການຫຼຸດຜ່ອນໂທດ ໃຫ້ແກ່ນັກໂທດທີ່ຖືກລົງໂທດປະຫານຊີວິດ**

ນັກໂທດທີ່ຖືກລົງໂທດປະຫານຊີວິດ ຊຶ່ງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 11 ຂອງລັດຖະບັນຍັດ ສະບັບນີ້ ກໍຈະໄດ້ຮັບການພິຈາລະນາຫຼຸດຜ່ອນໂທດ ມາເປັນ ໂທດຕັດອິດສະລະພາບຕະຫຼອດຊີວິດ;

ໃນກໍລະນີນັກໂທດ ທີ່ໄດ້ຮັບອະໄພຍະໂທດ ມາເປັນ ໂທດຕັດອິດສະຫຼະພາບແລ້ວນັ້ນ ຫາກໄດ້ປະຕິບັດໂທດມາແລ້ວ ສິບຫ້າປີ ນັບແຕ່ມື້ຖືກກັກຕົວ, ມີການປ່ຽນແປງດ້ານທັດສະນະແນວຄິດ, ມີຄວາມຮູ້ສຶກກິນແໜງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນໃນໄລຍະຜ່ານມາ ແລະ ມີການຮ້ອງຂໍອະໄພຍະໂທດຕາມ ມາດຕາ 39 ຂອງລັດຖະບັນຍັດສະບັບນີ້ ກໍຈະໄດ້ຮັບການພິຈາລະນາອະໄພຍະໂທດ ຫຼຸດຜ່ອນໂທດ ມາເປັນໂທດຕັດອິດສະລະພາບຊາວປີ.

**ມາດຕາ 16 ວິທີປະຕິບັດການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດ**

ວິທີປະຕິບັດການໃຫ້ອະໄພຍະໂທດ ຫຼຸດຜ່ອນໂທດແກ່ນັກໂທດ ຕາມລັດຖະດຳລັດຂອງປະທານປະເທດໄດ້ກຳນົດໄວ້ໃນລະບຽບການສະເພາະ ຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

## ໝວດທີ 2
## ການປ່ອຍຕົວ

**ມາດຕາ 17 ການປ່ອຍຕົວ**

ນັກໂທດ ທີ່ໄດ້ຮັບການໃຫ້ອະໄພຍະໂທດ ປ່ອຍຕົວ ຈະໄດ້ຮັບການປ່ອຍຕົວຕາມລະບຽບການ ແລະ ວິທີການຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງລັດຖະບັນຍັດ ສະບັບນີ້ ພາຍຫຼັງ ປະທານປະເທດ ໄດ້ອອກລັດຖະດຳລັດເປັນຕົ້ນໄປ.

**ມາດຕາ 18 ວິທີປະຕິບັດການໃຫ້ອະໄພຍະໂທດ ປ່ອຍຕົວ**

ວິທີການປ່ອຍຕົວນັກໂທດ ທີ່ໄດ້ຮັບອະໄພຍະໂທດນັ້ນ ໃຫ້ຄະນະກຳມະການອະໄພຍະໂທດ ລະດັບກະຊວງ, ແຂວງ ສົມທົບກັບຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງທີ່ກ່ຽວຂ້ອງ ເພື່ອທຳການສຶກສາອົບຮົມນັກໂທດຜູ້ໄດ້ຮັບອະໄພຍະໂທດປ່ອຍຕົວ ໃຫ້ເຫັນໄດ້ນະໂຍບາຍອັນຖືກຕ້ອງ ແລະ ເປັນທຳ ຂອງລັດຖະບານ ແຫ່ງ ສປປ ລາວ; ຈາກນັ້ນ ຈຶ່ງມອບໃບຢັ້ງຢືນການໃຫ້ອະໄພຍະໂທດປ່ອຍຕົວ ໃຫ້ແກ່ຜູ້ກ່ຽວ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບລັດຖະດຳລັດຂອງປະທານປະເທດ ວ່າດ້ວຍການໃຫ້ອະໄພຍະໂທດ ເປັນຕົ້ນໄປ ແລ້ວມອບໃຫ້ອົງການປົກຄອງທ້ອງຖິ່ນ ແລະ ຍາດພີ່ນ້ອງຂອງນັກໂທດ ສືບຕໍ່ຄຸ້ມຄອງ ແລະ ສຶກສາອົບຮົມ.

## ພາກທີ IV
## ຄະນະກຳມະການອະໄພຍະໂທດ
## ໝວດທີ 1
## ຄະນະກຳມະການອະໄພຍະໂທດ

**ມາດຕາ 19 ຄະນະກຳມະການອະໄພຍະໂທດ**

ຄະນະກຳມະການອະໄພຍະໂທດ ປະກອບດ້ວຍຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງ, ມີພາລະບົດບາດເປັນເສນາທິການໃຫ້ປະທານປະເທດ ໃນການຄົ້ນຄວ້າສັງລວມບັນຊີລາຍຊື່ນັກໂທດທີ່ມີເງື່ອນໄຂໄດ້ຮັບອະໄພຍະໂທດເພື່ອນຳສະເໜີຂໍການອະໄພຍະໂທດຈາກ ປະທານປະເທດ.

**ມາດຕາ 20 ລະດັບ ຄະນະກຳມະການອະໄພຍະໂທດ**

ຄະນະກຳມະການອະໄພຍະໂທດ ແບ່ງອອກເປັນ ສາມ ລະດັບດັ່ງນີ້:

1. ຄະນະກຳມະການອະໄພຍະໂທດ ລະດັບຊາດ;
2. ຄະນະກຳມະການອະໄພຍະໂທດ ລະດັບກະຊວງ;
3. ຄະນະກຳມະການອະໄພຍະໂທດ ລະດັບແຂວງ.

**ມາດຕາ 21 ຄະນະກຳມະການອະໄພຍະໂທດລະດັບຊາດ**

ຄະນະກຳມະການອະໄພຍະໂທດລະດັບຊາດປະກອບດ້ວຍ:

1. ຮອງນາຍົກລັດຖະມົນຕີ ປະທານ;
2. ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຮອງປະທານ, ທັງເປັນຜູ້ປະຈຳການ;
3. ລັດຖະມົນຕີ, ຫົວໜ້າຫ້ອງວ່າການປະທານປະເທດ ຮອງປະທານ;
4. ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຮອງປະທານ;
5. ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ ກຳມະການ;
6. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ກຳມະການ;
7. ຮອງລັດຖະມົນຕີ ກະຊວງຍຸຕິທຳ ກຳມະການ;
8. ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ກຳມະການ;
9. ຮອງປະທານ ສານປະຊາຊົນສູງສຸດ ກຳມະການ;
10. ຮອງປະທານ ສູນກາງແນວລາວສ້າງຊາດ ກຳມະການ;
11. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ, ທັງເປັນຫົວໜ້າກອງເລຂາ;

ຄະນະກຳມະການອະໄພຍະໂທດລະດັບຊາດ ຖືກແຕ່ງຕັ້ງ ຫຼື ຍຸບເລີກ ໂດຍປະທານປະເທດ ຕາມການສະເໜີຂອງ ນາຍົກລັດຖະມົນຕີ.

**ມາດຕາ 22 ຄະນະກຳມະການອະໄພຍະໂທດ ລະດັບ ກະຊວງ**

ຄະນະກຳມະການອະໄພຍະໂທດ ຂອງກະຊວງປ້ອງກັນປະເທດ ປະກອບດ້ວຍ:

1. ຮອງລັດຖະມົນຕີກະຊວງປ້ອງກັນປະເທດ ປະທານ;
2. ຮອງຫົວໜ້າກົມໃຫຍ່ການເມືອງກອງທັບ ຮອງປະທານ;
3. ຫົວໜ້າ ອົງການໄອຍະການທະຫານຂັ້ນສູງ ຮອງປະທານ;
4. ຫົວໜ້າສານທະຫານຂັ້ນສູງ ກຳມະການ;
5. ຫົວໜ້າກົມປ້ອງກັນພາຍໃນ ກຳມະການ.

ຄະນະກຳມະການອະໄພຍະໂທດ ຂອງກະຊວງປ້ອງກັນປະເທດ ຖືກແຕ່ງຕັ້ງ ຫຼືຍຸບເລີກ ໂດຍລັດຖະມົນຕີກະຊວງປ້ອງກັນປະເທດ ຕາມການສະເໜີຂອງກົມໃຫຍ່ການເມືອງກອງທັບ.

ຄະນະກຳມະການອະໄພຍະໂທດ ຂອງກະຊວງປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1. ຮອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ປະທານ;
2. ຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ ຮອງປະທານ;
3. ຮອງຫົວໜ້າກົມໃຫຍ່ຕຳຫຼວດ ກຳມະການ;
4. ຮອງຫົວໜ້າກົມໃຫຍ່ສັນຕິບານ ກຳມະການ;
5. ຫົວໜ້າກົມຕຳຫຼວດສືບສວນ-ສອບສວນ ຄະດີອາຍາ ກຳມະການ;
6. ຫົວໜ້າກົມຕຳຫຼວດສະກັດກັ້ນ ແລະ ປາບປາມຢາເສບຕິດ ກຳມະການ;
7. ຮອງຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ ກຳມະການ.

ຄະນະກຳມະການອະໄພຍະໂທດ ຂອງກະຊວງປ້ອງກັນຄວາມສະຫງົບ ຖືກແຕ່ງຕັ້ງ ຫຼືຍຸບເລີກໂດຍລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບຕາມການສະເໜີຂອງກົມໃຫຍ່ການເມືອງປ້ອງກັນຄວາມສະຫງົບ.

**ມາດຕາ 23 ຄະນະກຳມະການອະໄພຍະໂທດ ລະດັບ ແຂວງ**

ຄະນະກຳມະການອະໄພຍະໂທດລະດັບ ແຂວງ ປະກອບດ້ວຍ:

1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ປະທານ;
2. ຫົວໜ້າອົງການໄອຍະການປະຊາຊົນ ແຂວງ, ນະຄອນຫຼວງ ຮອງປະທານ;
3. ຫົວໜ້າຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ ຮອງປະທານ;
4. ຮອງຫົວໜ້າກອງບັນຊາການທະຫານ ແຂວງ, ນະຄອນຫຼວງ ກຳມະການ;
5. ຮອງຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ກຳມະການ;
6. ຮອງຫົວໜ້າພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ກຳມະການ;
7. ຮອງຫົວໜ້າພະແນກການຕ່າງປະເທດ ແຂວງ, ນະຄອນຫຼວງ ກຳມະການ;
8. ຮອງປະທານສານປະຊາຊົນ ແຂວງ, ນະຄອນຫຼວງ ກຳມະການ;
9. ຮອງປະທານແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ກຳມະການ.

ຄະນະກຳມະການອະໄພຍະໂທດລະດັບ ແຂວງ ຖືກແຕ່ງຕັ້ງ ຫຼື ຍຸບເລີກ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະຈັດຕັ້ງແຂວງ, ນະຄອນຫຼວງ.

## ໝວດທີ 2
## ສິດ ແລະ ໜ້າທີ່ ຂອງຄະນະກຳມະການອະໄພຍະໂທດ

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ**

ຄະນະກຳມະການອະໄພຍະໂທດລະດັບຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ແລະ ນຳພາລວມ ຄະນະກຳມະການອະໄພຍະໂທດ ລະດັບກະຊວງ ແລະ ລະດັບແຂວງ ກ່ຽວກັບວຽກງານອະໄພຍະໂທດ;
2. ໂຄສະນາເຜີຍແຜ່ ລັດຖະບັນຍັດ ແລະ ລັດຖະດຳລັດ ວ່າດ້ວຍການໃຫ້ອະໄພຍະໂທດ;
3. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານອະໄພຍະໂທດ;
4. ແຕ່ງຕັ້ງກອງເລຂາຊ່ວຍວຽກຂອງຕົນ;
5. ຄົ້ນຄວ້າ, ພິຈາລະນາ, ຕົກລົງ ຫຼື ປ່ຽນແປງ ບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂ ໄດ້ຮັບອະໄພຍະໂທດທີ່ຄະນະກຳມະການອະໄພຍະໂທດ ລະດັບກະຊວງ ແລະ ລະດັບແຂວງ ສະເໜີມາ;
6. ກວດກາ ແລະ ລາຍງານ ບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດຕໍ່ ລັດຖະບານເພື່ອນຳສະເໜີຕໍ່ປະທານປະເທດ ພິຈາລະນາ;
7. ອອກໃບຢັ້ງຢືນການໃຫ້ອະໄພຍະໂທດ ໃຫ້ແກ່ຜູ້ໄດ້ຮັບນະໂຍບາຍອະໄພຍະໂທດ ຫຼຸດຜ່ອນໂທດ ແລະປ່ອຍຕົວ ພາຍຫຼັງປະທານປະເທດ ອອກລັດຖະດຳລັດວ່າດ້ວຍການໃຫ້ອະໄພຍະໂທດ;
8. ສະຫຼຸບ, ລາຍງານວຽກງານອະໄພຍະໂທດຕໍ່ປະທານປະເທດ ແລະ ລັດຖະບານ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມກົດໝາຍ, ລະບຽບການ ຫຼືຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຄະນະກຳມະການອະໄພຍະໂທດ ລະດັບກະຊວງ**

ຄະນະກຳມະການອະໄພຍະໂທດລະດັບກະຊວງ ມີສິດ ແລະ ໜ້າທີ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາລວມ ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ທີ່ຂຶ້ນກັບກະຊວງ ກ່ຽວກັບວຽກງານອະໄພຍະໂທດ;
2. ໂຄສະນາເຜີຍແຜ່ ລັດຖະບັນຍັດ ແລະ ລັດຖະດຳລັດ ວ່າດ້ວຍການໃຫ້ອະໄພຍະໂທດ;

3. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານອະໄພຍະໂທດ;

4. ຄົ້ນຄວ້າ, ພິຈາລະນາ, ຕົກລົງ ຫຼື ປ່ຽນແປງ ບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ທີ່ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ທີ່ຂຶ້ນກັບກະຊວງສະເໜີມາ;

5. ແຕ່ງຕັ້ງກອງເລຂາຊ່ວຍວຽກຂອງຕົນ;

6. ເຮັດບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດເພື່ອນຳສະເໜີຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ ພິຈາລະນາ;

7. ຈັດຕັ້ງພິທີປະກາດລາຍຊື່ນັກໂທດຜູ້ໄດ້ຮັບໃບຢັ້ງຢືນອະໄພຍະໂທດປ່ອຍຕົວ ແລະ ລາຍຊື່ນັກໂທດຜູ້ໄດ້ຮັບອະໄພຍະໂທດ ຫຼຸດຜ່ອນໂທດ ຕາມລັດຖະດຳລັດ ຂອງປະທານປະເທດ;

8. ຂໍການຊີ້ນຳ, ສະຫຼຸບ ແລະ ລາຍງານວຽກງານອະໄພຍະໂທດ ຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກົດໝາຍ, ລະບຽບການໄດ້ກຳນົດໄວ້ ຫຼື ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງຄະນະກຳມະການອະໄພຍະໂທດ ລະດັບແຂວງ**

ຄະນະກຳມະການອະໄພຍະໂທດລະດັບແຂວງ ມີສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊີ້ນຳ ແລະ ນຳພາລວມຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງທີ່ຂຶ້ນກັບແຂວງ, ນະຄອນຫຼວງ ກ່ຽວກັບວຽກງານອະໄພຍະໂທດ;

2. ໂຄສະນາເຜີຍແຜ່ລັດຖະບັນຍັດ ແລະ ລັດຖະດຳລັດ ວ່າດ້ວຍການໃຫ້ອະໄພຍະໂທດ;

3. ອອກຂໍ້ຕົກລົງ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບວຽກງານອະໄພຍະໂທດ;

4. ແຕ່ງຕັ້ງກອງເລຂາຊ່ວຍວຽກຂອງຕົນ;

5. ຄົ້ນຄວ້າ, ພິຈາລະນາ, ຕົກລົງ ຫຼື ປ່ຽນແປງ ບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ທີ່ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ທີ່ຂຶ້ນກັບ ແຂວງ, ນະຄອນຫຼວງສະເໜີມາ;

6. ສັງລວມບັນຊີລາຍຊື່ນັກໂທດ ຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ເພື່ອນຳສະເໜີຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ ພິຈາລະນາ;

7. ຈັດຕັ້ງພິທີປະກາດລາຍຊື່ ນັກໂທດຜູ້ມີເງື່ອນໄຂອະໄພຍະໂທດ ຫຼຸດຜ່ອນໂທດ ແລະ ປ່ອຍຕົວ ຕາມລັດຖະດຳລັດຂອງປະທານປະເທດ;

8. ຂໍການຊີ້ນຳ, ສະຫຼຸບ ແລະ ລາຍງານວຽກງານອະໄພຍະໂທດ ຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ຫຼື ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

## ໝວດທີ 3
## ກອງເລຂາຄະນະກຳມະການອະໄພຍະໂທດ

**ມາດຕາ 27 ກອງເລຂາຄະນະກຳມະການອະໄພຍະໂທດ**

ກອງເລຂາຄະນະກຳມະການອະໄພຍະໂທດ ມີພາລະບົດບາດຕົ້ນຕໍເປັນເສນາທິການໃຫ້ ຄະນະກຳມະການອະໄພຍະໂທດ ໃນການຄົ້ນຄວ້າສັງລວມບັນຊີລາຍຊື່ນັກໂທດ ທີ່ມີເງື່ອນໄຂໄດ້ຮັບອະໄພຍະໂທດ ເພື່ອນຳສະເໜີຕໍ່ຄະນະກຳມະການອະໄພຍະໂທດ ຂັ້ນຂອງຕົນພິຈາລະນາ.

**ມາດຕາ 28 ກອງເລຂາຄະນະກຳມະການອະໄພຍະໂທດ ລະດັບຊາດ**

ກອງເລຂາຄະນະກຳມະການອະໄພຍະໂທດລະດັບຊາດ ປະກອບດ້ວຍ:

1. ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນ ຫົວໜ້າ;
2. ຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງກະຊວງປ້ອງກັນຄວາມສະຫງົບ ເປັນ ຮອງຫົວໜ້າ;
3. ຫົວໜ້າກົມຕິດຕາມກວດກາຄ້າຍຄຸມຂັງ-ດັດສ້າງອົງການໄອຍະການປະຊາຊົນສູງສຸດ ເປັນຮອງຫົວໜ້າ;
4. ຫົວໜ້າກົມກົດໝາຍ ຫ້ອງວ່າການປະທານປະເທດ ເປັນ ຮອງຫົວໜ້າ;
5. ຫົວໜ້າກົມນິຕິກຳ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນ ຮອງຫົວໜ້າ;
6. ຫົວໜ້າຄະນະສານອາຍາ ສານປະຊາຊົນສູງສຸດ ເປັນ ກຳມະການ;
7. ຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານກະຊວງຍຸຕິທຳ ເປັນ ກຳມະການ;
8. ຮອງຫົວໜ້າກົມປ້ອງກັນພາຍໃນ ກະຊວງປ້ອງກັນປະເທດ ເປັນ ກຳມະການ;
9. ຮອງຫົວໜ້າກົມສົນທິສັນຍາ ແລະ ກົດໝາຍ ກະຊວງການຕ່າງປະເທດ ເປັນ ກຳມະການ;
10. ຫົວໜ້າພະແນກຄຸ້ມຄອງ ແລະ ສຶກສາອົບຮົມນັກໂທດ ກົມຕຳຫຼວດຄຸມຂັງ-ດັດສ້າງກະຊວງປ້ອງກັນຄວາມສະຫງົບ ເປັນ ກຳມະການ;
11. ຫົວໜ້າພະແນກກວດກາຄ້າຍດັດສ້າງ ກົມກວດກາຄ້າຍຄຸມຂັງ-ດັດສ້າງ ອົງການໄອຍະການປະຊາຊົນສູງສຸດ ເປັນ ກຳມະການ;
12. ຫົວໜ້າພະແນກຕິດຕາມກວດກາຄ້າຍດັດສ້າງ ອົງການໄອຍະການທະຫານຂັ້ນສູງ ກະຊວງປ້ອງກັນປະເທດ ເປັນ ກຳມະການ;
13. ຫົວໜ້າພະແນກຄົ້ນຄວ້າອະໄພຍະໂທດ, ກົມກົດໝາຍ, ຫ້ອງວ່າການປະທານປະເທດ ເປັນ ກຳມະການ;
14. ຫົວໜ້າພະແນກກ່ຽວຂ້ອງ ກົມນິຕິກຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນ ກຳມະການ;
15. ພະນັກງານວິຊາການຂອງກົມກ່ຽວຂ້ອງ ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງ ກັນປະເທດ, ຫ້ອງວ່າການປະທານປະເທດ, ຫ້ອງວ່າການສຳນັກງານນາຍົກ ແລະ ອົງການໄອຍະການປະຊາຊົນສູງສຸດຈຳນວນໜຶ່ງ ເປັນ ກຳມະການ.

ກອງເລຂາຄະນະກຳມະການອະໄພຍະໂທດລະດັບຊາດ ຖືກແຕ່ງຕັ້ງ ຫຼື ຍຸບເລີກ ໂດຍປະທານຄະນະກຳມະການອະໄພຍະໂທດ ລະດັບຊາດ.

ກອງເລຂາຄະນະກຳມະການອະໄພຍະໂທດ ລະດັບຊາດ ມີຫ້ອງການປະຈຳຢູ່ອົງການໄອຍະການປະຊາຊົນສູງສຸດ.

ສຳລັບ ໂຄງປະກອບຂອງກອງເລຂາຄະນະກຳມະການອະໄພຍະໂທດ ລະດັບກະຊວງ, ແຂວງ ໃຫ້ຖືເອົາພາກສ່ວນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນ ມາດຕາ 22 ແລະ 23 ຂອງລັດຖະບັນຍັດສະບັບນີ້.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການອະໄພຍະໂທດ ລະດັບຊາດ**

ກອງເລຂາຄະນະກຳມະການອະໄພຍະໂທດ ລະດັບຊາດ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າຮ່າງຄຳແນະນຳ ແລະ ແຈ້ງການ ຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ກ່ຽວກັບວຽກງານອະໄພຍະໂທດ ໃຫ້ຄະນະກຳມະການ ຂັ້ນກະຊວງ ແລະ ແຂວງ ນຳໄປຈັດຕັ້ງປະຕິບັດ ຕາມແຜນການຂອງຄະນະກຳມະການ ອະໄພຍະໂທດ ລະດັບຊາດ;

2. ສ້າງແຜນການເຄື່ອນໄຫວວຽກງານອະໄພຍະໂທດຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ແຕ່ລະໄລຍະ;

3. ຄົ້ນຄວ້າ ແລະ ກວດກາ ບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ທີ່ຄະນະກຳມະການອະໄພຍະໂທດ ຂອງກະຊວງ, ແຂວງ, ນະຄອນຫຼວງ ສະເໜີມາ;

4. ສັງລວມບັນຊີລາຍຊື່ນັກໂທດຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ເພື່ອສະເໜີຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ ພິຈາລະນາ;

5. ຮ່າງໜັງສືສະເໜີຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ກ່ຽວກັບບັນຊີລາຍຊື່ນັກໂທດ ຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດ ຕໍ່ນາຍົກລັດຖະມົນຕີ ພິຈາລະນາ;

6. ສ້າງແຜນງົບປະມານປະຈຳປີເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານອະໄພຍະໂທດຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ຕາມລະບຽບການ;

7. ສະຫຼຸບສັງລວມ ສະພາບການຈັດຕັ້ງປະຕິບັດພິທີປະກາດລາຍຊື່ອະໄພຍະໂທດນັກໂທດຂອງຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ໃນຂອບເຂດທົ່ວປະເທດ ແລະ ລາຍງານຕໍ່ ຄະນະກຳມະການອະໄພຍະໂທດ ລະດັບຊາດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້ ຫຼື ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

ສຳລັບ ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການອະໄພຍະໂທດລະດັບ ກະຊວງ, ແຂວງ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ V
## ຄວາມຮັບຜິດຊອບຂອງຂະແໜງການກ່ຽວກັບວຽກງານອະໄພຍະໂທດ

### ມາດຕາ 30 ຄວາມຮັບຜິດຊອບຂອງຫ້ອງວ່າການປະທານປະເທດ

ຫ້ອງວ່າການປະທານປະເທດ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ຄົ້ນຄວ້າໃນເບື້ອງຕົ້ນພາຍຫຼັງໄດ້ຮັບຄຳຮ້ອງຂໍອະໄພຍະໂທດ ຂອງນັກໂທດປະຫານຊີວິດ ແລ້ວສັງລວມນຳສິ່ງໃຫ້ຄະນະກຳມະການອະໄພຍະໂທດ ລະດັບຊາດ;

2. ເຂົ້າຮ່ວມກອງປະຊຸມ ຄະນະກຳມະການອະໄພຍະໂທດ ລະດັບຊາດ ໃນການຄົ້ນຄວ້ານຳສະເໜີການໃຫ້ອະໄພຍະໂທດ ແກ່ນັກໂທດທີ່ມີເງື່ອນໄຂໃຫ້ອະໄພຍະໂທດ;

3. ກວດກາຄວາມຖືກຕ້ອງ ແລະ ນຳສະເໜີບັນຊີລາຍຊື່ນັກໂທດທີ່ມີເງື່ອນໄຂ ອະໄພຍະໂທດ ຫຼຸດ ຜ່ອນໂທດ ແລະ ປ່ອຍຕົວ ຕາມການສະເໜີຂອງນາຍົກລັດຖະມົນຕີ ກ່ອນນຳສະເໜີ ຕໍ່ປະທານປະເທດ ເພື່ອພິຈາລະນາໃຫ້ອະໄພຍະໂທດ;

4. ເຂົ້າຮ່ວມພິທີປະກາດໃຫ້ອະໄພຍະໂທດ;

5. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍ ຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

### ມາດຕາ 31 ຄວາມຮັບຜິດຊອບຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

1. ເຂົ້າຮ່ວມກອງປະຊຸມ ຄະນະກຳມະການອະໄພຍະໂທດລະດັບຊາດ ໃນການຄົ້ນຄວ້ານຳສະເໜີການໃຫ້ອະໄພຍະໂທດ ແກ່ນັກໂທດທີ່ມີເງື່ອນໄຂໃຫ້ອະໄພຍະໂທດ;

2. ກວດກາຄວາມຖືກຕ້ອງ ແລະ ນຳສະເໜີບັນຊີລາຍຊື່ນັກໂທດທີ່ມີເງື່ອນໄຂອະໄພຍະໂທດຫຼຸດ ຜ່ອນໂທດ ແລະ ປ່ອຍຕົວ ຕາມການສະເໜີຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາ;

3. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 32 ຄວາມຮັບຜິດຊອບຂອງ ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ຊີ້ນຳ ແລະ ນຳພາ ການໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດລັດຖະບັນຍັດ ແລະ ລັດຖະດຳລັດວ່າດ້ວຍການໃຫ້ອະໄພຍະໂທດແກ່ກົມກອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ຊີ້ນຳ, ນຳພາ ການຄຸ້ມຄອງ ແລະ ການສຶກສາອົບຮົມນັກໂທດ;

3. ສົມທົບກັບອົງການໄອຍະການປະຊາຊົນສູງສຸດ ເພື່ອຊີ້ນຳ ແລະ ນຳພາການດຳເນີນການຄັດເລືອກຈັດປະເພດນັກໂທດ ປະຈຳເດືອນ, ສາມເດືອນ, ຫົກເດືອນ ແລະ ປະຈຳປີ, ສະຫຼຸບ ແລະ ເຮັດບັນຊີລາຍຊື່ນັກໂທດ ຜູ້ມີເງື່ອນໄຂໄດ້ຮັບອະໄພຍະໂທດປະຈຳປີ;

4. ຊີ້ນຳ ແລະ ນຳພາ ຄ້າຍຄຸມຂັງ-ດັດສ້າງ ຈັດພິທີປະກາດອະໄພຍະໂທດ ຕາມລັດຖະດຳລັດຂອງປະທານປະເທດ;

5. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍ ຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 33 ຄວາມຮັບຜິດຊອບຂອງອົງການໄອຍະການປະຊາຊົນສູງສຸດ**

ອົງການໄອຍະການປະຊາຊົນສູງສຸດ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ຄະນະກຳມະການອະໄພຍະໂທດລະດັບຊາດໃນການຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດຕາມລັດຖະບັນຍັດ ສະບັບນີ້;

2. ເປັນໃຈກາງປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງໃນວຽກງານອະໄພຍະໂທດ;

3. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 34 ຄວາມຮັບຜິດຊອບຂອງ ສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດດັ່ງນີ້:

1. ຊີ້ນຳ ແລະ ຕິດຕາມ ສານປະຊາຊົນໃນການສົ່ງຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຫຼື ຄຳຊີ້ຂາດຂອງສານປະຊາຊົນສູງສຸດ ໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ, ອົງການໄອຍະການປະຊາຊົນ ແລະ ນັກໂທດຕາມກົດໝາຍ;

2. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 35 ຄວາມຮັບຜິດຊອບຂອງ ກະຊວງຍຸຕິທຳ**

ກະຊວງຍຸຕິທຳ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ໂຄສະນາເຜີຍແຜ່ ລັດຖະບັນຍັດ ແລະ ລັດຖະດຳລັດວ່າດ້ວຍ ການໃຫ້ອະໄພຍະໂທດ ໃນຂອບເຂດທົ່ວປະເທດ;

2. ຊີ້ນຳ ແລະ ຕິດຕາມ ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ກ່ຽວກັບວຽກງານອະໄພຍະໂທດ:

- ສົມທົບກັບເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ເພື່ອປຸກລະດົມນັກໂທດໃຫ້ມີຄວາມຕື່ນຕົວ ແລະ ສະໝັກໃຈໃຊ້ແທນ ຄ່າເສຍຫາຍທາງແພ່ງ ແລະ ຄ່າປັບໃໝຕາມຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

- ເຮັດບົດບັນທຶກກັບນັກໂທດຜູ້ຍັງຈະສືບຕໍ່ຊຳລະການໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຄ່າປັບໃໝກ່ອນຈະໄດ້ຮັບການປ່ອຍຕົວ.

- ອອກໃບຢັ້ງຢືນ ຮັບເງິນໃຫ້ແກ່ນັກໂທດຜູ້ໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງ, ຊໍາລະຄ່າປັບໃໝທາງອາຍາ ແລະ ສະຫຼຸບລາຍງານຕໍ່ຄະນະກໍາມະການອະໄພຍະໂທດລະດັບຊາດ.

3. ມີຄວາມຮັບຜິດຊອບອື່ນຕາມການມອບໝາຍຂອງຄະນະກໍາມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 36 ຄວາມຮັບຜິດຊອບຂອງ ສູນກາງແນວລາວສ້າງຊາດ**

ສູນກາງແນວລາວສ້າງຊາດ ມີຄວາມຮັບຜິດຊອບກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ໂຄສະນາເຜີຍແຜ່ລັດຖະບັນຍັດວ່າດ້ວຍການໃຫ້ອະໄພຍະໂທດແກ່ປະຊາຊົນລາວບັນດາເຜົ່າ;
2. ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນເພື່ອສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ແກ່ຜູ້ໄດ້ຮັບອະໄພຍະໂທດປ່ອຍຕົວ ໃຫ້ກາຍເປັນພົນລະເມືອງດີ;
3. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກໍາມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 37 ຄວາມຮັບຜິດຊອບຂອງ ກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີຄວາມຮັບຜິດຊອບ ກ່ຽວກັບວຽກງານອະໄພຍະໂທດ ດັ່ງນີ້:

1. ຊີ້ນໍາ ແລະ ນໍາພາ ກ່ຽວກັບວຽກງານອະໄພຍະໂທດໃນຂອບເຂດຄວາມຮັບຜິດ ຊອບຂອງຕົນ;
2. ປະສານສົມທົບກັບສໍານັກງານຜູ້ຕາງໜ້າທາງການທູດ, ສໍານັກງານຜູ້ຕາງໜ້າກົງສູນຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ປະຈໍາຢູ່ ສປປ ລາວ ເພື່ອຄຸ້ມຄອງ, ອໍານວຍຄວາມສະດວກແກ່ນັກໂທດ ຕ່າງປະເທດໃຫ້ປະຕິບັດຖືກຕ້ອງໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ;
3. ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ເພື່ອກວດກາການໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຊໍາລະຄ່າປັບໃໝທາງອາຍາ ກ່ອນຈະອະນຸຍາດໃຫ້ອອກຈາກ ສປປ ລາວ;
4. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກໍາມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 38 ຄວາມຮັບຜິດຊອບຂອງ ອົງການປົກຄອງທ້ອງຖິ່ນ**

ອົງການປົກຄອງທ້ອງຖິ່ນມີຄວາມຮັບຜິດຊອບກ່ຽວກັບວຽກງານອະໄພຍະໂທດດັ່ງນີ້:

1. ຊີ້ນໍາ ແລະ ນໍາພາ ກ່ຽວກັບວຽກງານອະໄພຍະໂທດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຄົ້ນຄວ້າ, ພິຈາລະນາ, ຕົກລົງ ແລະ ແຕ່ງຕັ້ງຄະນະກໍາມະການອະໄພຍະໂທດ;
3. ປະສານສົມທົບກັບ ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ເພື່ອໂຄສະນາເຜີຍແຜ່ການໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ ຊໍາລະຄ່າປັບໃໝ;
4. ຊີ້ນໍາ ແລະ ນໍາພາການໂຄສະນາ, ເຜີຍແຜ່ການຈັດຕັ້ງປະຕິບັດລັດຖະບັນຍັດ ແລະ ລັດຖະດໍາລັດວ່າດ້ວຍການໃຫ້ອະໄພຍະໂທດ;
5. ມີຄວາມຮັບຜິດຊອບອື່ນ ຕາມການມອບໝາຍຂອງຄະນະກໍາມະການອະໄພຍະໂທດ ລະດັບຊາດ.

## ພາກທີ VI
## ການຮ້ອງຂໍອະໄພຍະໂທດ
### ໝວດທີ 1
### ຜູ້ມີສິດໃນການຮ້ອງຂໍ

**ມາດຕາ 39 ຜູ້ມີສິດ ໃນການຮ້ອງຂໍອະໄພຍະໂທດ**

ບຸກຄົນ ທີ່ມີສິດຮ້ອງຂໍອະໄພຍະໂທດ ມີດັ່ງນີ້:

1. ນັກໂທດ ທີ່ປະຕິບັດໂທດຢູ່ຄ້າຍຄຸມຂັງ-ດັດສ້າງ;
2. ພໍ່ ຫຼື ແມ່, ຜົວ ຫຼື ເມຍ, ລູກ, ຜູ້ປົກຄອງຂອງນັກໂທດ;
3. ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຫຼື ຍາດໃກ້ຊິດຂອງນັກໂທດທີ່ໄດ້ຮັບການມອບໝາຍ.

**ມາດຕາ 40 ການປະກອບເອກະສານກ່ຽວກັບການຮ້ອງຂໍອະໄພຍະໂທດ**

ເອກະສານ ກ່ຽວກັບການຮ້ອງຂໍອະໄພຍະໂທດ ປະກອບດ້ວຍ:

1. ຄໍາຮ້ອງຂໍອະໄພຍະໂທດ;
2. ຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, ສໍາລັບນັກໂທດປະຫານຊີວິດ ຕ້ອງມີ ຄໍາຊີ້ຂາດຂອງສານປະຊາຊົນສູງສຸດ ຕື່ມອີກ;
3. ສໍາເນົາປຶ້ມສໍາມະໂນຄົວ ຫຼື ສໍາເນົາໜັງສືຜ່ານແດນ ສໍາລັບຄົນຕ່າງປະເທດ;
4. ໃບຊີວະປະຫວັດຂອງນັກໂທດ;
5. ເອກະສານຢັ້ງຢືນ ກ່ຽວກັບການໃຊ້ແທນຄ່າເສຍຫາຍທາງແພ່ງ, ຄ່າປັບໃໝ;
6. ເອກະສານຢັ້ງຢືນການສືບຕໍ່ໃຊ້ແທນຄ່າເສຍຫາຍທາງແພ່ງ, ຄ່າປັບໃໝ;
7. ໃບຢັ້ງຢືນກ່ຽວກັບຜົນງານຂອງນັກໂທດ;
8. ເອກະສານອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 41 ການຍື່ນຄໍາຮ້ອງຂໍອະໄພຍະໂທດ**

- ຄໍາຮ້ອງຂໍອະໄພຍະໂທດໃຫ້ຍື່ນຕໍ່ຄ້າຍຄຸມຂັງ-ດັດສ້າງ ບ່ອນທີ່ນັກໂທດປະຕິບັດໂທດ;
- ຄໍາຮ້ອງຂໍອະໄພຍະໂທດ ຂອງນັກໂທດປະຫານຊີວິດ ໃຫ້ຍື່ນຕໍ່ຫ້ອງວ່າການປະທານປະເທດ;
- ຄໍາຮ້ອງຂໍອະໄພຍະໂທດຂອງນັກໂທດທີ່ເປັນຄົນຕ່າງປະເທດ, ນອກຈາກຈະຍື່ນໂດຍກົງຕໍ່ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ແລ້ວ, ຍັງມີສິດຍື່ນຄໍາຮ້ອງຂໍອະໄພຍະໂທດ ໂດຍຜ່ານກະຊວງການຕ່າງປະເທດ.

ການຍື່ນຄໍາຮ້ອງຂໍອະໄພຍະໂທດ ໃຫ້ດໍາເນີນພາຍຫຼັງຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຫຼື ຄໍາຊີ້ຂາດຂອງປະທານສານປະຊາຊົນສູງສຸດ ທີ່ຢັ້ງຢືນເອົາຕາມຄໍາຕັດສິນ ຫຼື ຄໍາພິພາກສາປະຫານຊີວິດ.

## ໝວດທີ 2
## ການພິຈາລະນາຄໍາຮ້ອງຂໍອະໄພຍະໂທດ

**ມາດຕາ 42 ການພິຈາລະນາຄໍາຮ້ອງຂໍອະໄພຍະໂທດ**

ການພິຈາລະນາຄໍາຮ້ອງຂໍອະໄພຍະໂທດໃຫ້ປະຕິບັດ ດັ່ງນີ້:

1. ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ຂັ້ນສູນກາງ ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະໄພຍະໂທດແລ້ວ ຕ້ອງຄົ້ນຄວ້າພິຈາລະນາໃຫ້ສໍາເລັດກ່ອນວັນທີ 1 ເມສາ ຂອງປີ ແລ້ວນໍາສະເໜີຕໍ່ຄະນະກໍາມະການອະໄພຍະໂທດຂອງກະຊວງປ້ອງກັນຄວາມສະຫງົບ;
2. ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ຂັ້ນທ້ອງຖິ່ນ ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະໄພຍະໂທດແລ້ວ ຕ້ອງຄົ້ນຄວ້າພິຈາລະນາໃຫ້ສໍາເລັດກ່ອນວັນທີ 1 ເມສາ ຂອງປີ ແລ້ວນໍາສະເໜີຕໍ່ຄະນະກໍາມະການອະໄພຍະໂທດລະດັບແຂວງ-ນະຄອນຫຼວງ;
3. ເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງຂອງທະຫານ ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະໄພຍະໂທດແລ້ວ ຕ້ອງຄົ້ນຄວ້າພິຈາລະນາໃຫ້ສໍາເລັດກ່ອນວັນທີ 1 ເມສາ ຂອງປີ ແລ້ວນໍາສະເໜີຕໍ່ຄະນະກໍາມະການອະໄພຍະໂທດຂອງກະຊວງປ້ອງກັນປະເທດ.

**ມາດຕາ 43 ການພິຈາລະນາຄໍາຮ້ອງຂໍອະໄພຍະໂທດ ຂອງນັກໂທດທີ່ຖືກລົງໂທດປະຫານຊີວິດ**

ຫ້ອງວ່າການປະທານປະເທດ ພາຍຫຼັງໄດ້ຮັບຄໍາຮ້ອງຂໍອະໄພຍະໂທດຂອງນັກໂທດປະຫານຊີວິດ ແລ້ວຕ້ອງຄົ້ນຄວ້າໃຫ້ສໍາເລັດພາຍໃນ 30 ວັນ ແລ້ວນໍາສະເໜີຕໍ່ຄະນະກໍາມະການອະໄພຍະໂທດ ລະດັບຊາດ.

**ມາດຕາ 44 ກຳນົດເວລາຄົ້ນຄວ້າພິຈາລະນາການໃຫ້ອະໄພຍະໂທດ**

ຄະນະກຳມະການອະໄພຍະໂທດ ຄົ້ນຄວ້າພິຈາລະນາການໃຫ້ອະໄພຍະໂທດ ຕາມກຳນົດເວລາ ດັ່ງນີ້:

1. ຄະນະກຳມະການອະໄພຍະໂທດລະດັບ ກະຊວງ, ແຂວງ-ນະຄອນຫຼວງ ຄົ້ນຄວ້າພິຈາລະນາການໃຫ້ອະໄພຍະໂທດໃຫ້ສຳເລັດກ່ອນ ວັນທີ 30 ເມສາ ຂອງປີ ແລ້ວນຳສະເໜີຕໍ່ຄະນະກຳມະການອະໄພຍະໂທດລະດັບຊາດ;

2. ກອງເລຂາຄະນະກຳມະການອະໄພຍະໂທດລະດັບຊາດ ຄົ້ນຄວ້າກວດກາ ແລະ ສັງລວມ ໃຫ້ສຳເລັດກ່ອນວັນທີ 30 ກໍລະກົດ ຂອງປີແລ້ວນຳສະເໜີຕໍ່ຄະນະກຳມະການອະໄພຍະໂທດ ລະດັບຊາດ; ສຳລັບການຄົ້ນຄວ້າກວດກາ ແລະ ສັງລວມການຮ້ອງຂໍອະໄພຍະໂທດຂອງນັກໂທດປະຫານຊີວິດຕ້ອງດຳເນີນກ່ອນກອງປະຊຸມຂອງຄະນະກຳມະການອະໄພຍະໂທດ ລະດັບຊາດ ຢ່າງໜ້ອຍ ສິບຫ້າວັນ;

3. ຄະນະກຳມະການອະໄພຍະໂທດລະດັບຊາດ ຄົ້ນຄວ້າພິຈາລະນາການໃຫ້ອະໄພຍະໂທດໃຫ້ສຳເລັດກ່ອນ ວັນທີ 01 ກັນຍາ ຂອງປີ ແລ້ວນຳສະເໜີຕໍ່ລັດຖະບານ; ສຳລັບການຄົ້ນຄວ້າໃຫ້ອະໄພຍະໂທດແກ່ນັກໂທດປະຫານຊີວິດ ດຳເນີນສາມເດືອນຕໍ່ຄັ້ງ;

4. ຫ້ອງວ່າການປະທານປະເທດ ກວດກາ ຄວາມຖືກຕ້ອງ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີຂອງລັດຖະບານ ເປັນຕົ້ນໄປ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 45 ຂໍ້ຫ້າມ ສຳລັບ ຄະນະກຳມະການອະໄພຍະໂທດ**

ຫ້າມຄະນະກຳມະການອະໄພຍະໂທດ ມີການກະທຳດັ່ງນີ້:

1. ສວຍໃຊ້ສິດ ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຜົນປະໂຫຍດຂອງຕົນຈາກການໃຫ້ອະໄພຍະໂທດ;
2. ຮັບສິນບົນ ຫຼື ຂົ່ມຂູ່ ໃນການປະຕິບັດວຽກງານອະໄພຍະໂທດ;
3. ສ້າງຄວາມຫຍຸ້ງຍາກ ໃຫ້ຜູ້ມີເງື່ອນໄຂ ບໍ່ໃຫ້ໄດ້ຮັບອະໄພຍະໂທດ;
4. ປອມແປງເອກະສານ ກ່ຽວກັບການຮ້ອງຂໍອະໄພຍະໂທດ;
5. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານອະໄພຍະໂທດ.

**ມາດຕາ 46 ຂໍ້ຫ້າມ ສຳລັບນັກໂທດ**

ຫ້າມນັກໂທດ ມີການກະທຳດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ຫຼື ຄະນະກຳມະການອະໄພຍະໂທດ;
2. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານອະໄພຍະໂທດ.

**ມາດຕາ 47 ຂໍ້ຫ້າມ ສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ ແລະ ການຈັດຕັ້ງອື່ນ ມີການກະທຳດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ໃຫ້ສິນບົນ ເພື່ອຊ່ວຍນັກໂທດ ໄດ້ຮັບອະໄພຍະໂທດ;
2. ຂົ່ມຂູ່ ພະນັກງານ, ເຈົ້າໜ້າທີ່ ຫຼື ຄະນະກຳມະການອະໄພຍະໂທດ;
3. ລາຍງານ, ໃຫ້ການຢັ້ງຢືນສິ່ງທີ່ບໍ່ຖືກຕ້ອງ ກ່ຽວກັບວຽກງານອະໄພຍະໂທດ;
4. ປອມແປງເອກະສານ ກ່ຽວກັບການຮ້ອງຂໍອະໄພຍະໂທດ;
5. ມີການກະທຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານອະໄພຍະໂທດ.

## ພາກທີ VIII
## ການຄຸ້ມຄອງ ແລະ ກວດກາ ວຽກງານໃຫ້ອະໄພຍະໂທດ

**ມາດຕາ 48 ອົງການຄຸ້ມຄອງ**

ອົງການຄຸ້ມຄອງ ວຽກງານອະໄພຍະໂທດ ປະກອບດ້ວຍ:

1. ຫ້ອງວ່າການ ປະທານປະເທດ;
2. ຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ;
3. ກະຊວງປ້ອງກັນປະເທດ;
4. ກະຊວງປ້ອງກັນຄວາມສະຫງົບ;
5. ອົງການໄອຍະການປະຊາຊົນສູງສຸດ;
6. ສານປະຊາຊົນສູງສຸດ;
7. ກະຊວງຍຸຕິທຳ;
8. ສູນກາງແນວລາວສ້າງຊາດ;
9. ກະຊວງການຕ່າງປະເທດ;
10. ອົງການປົກຄອງທ້ອງຖິ່ນ.

ຄວາມຮັບຜິດຊອບກໍຄືສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງວຽກງານອະໄພຍະໂທດໄດ້ກຳນົດໄວ້ໃນມາດຕາ 30, 31, 32, 33, 34, 35, 36, 37, 38 ແລະ 39 ຂອງລັດຖະບັນຍັດ ສະບັບນີ້.

**ມາດຕາ 49 ອົງການກວດກາ**

ອົງການກວດກາວຽກງານອະໄພຍະໂທດ ປະກອບດ້ວຍ:

1. ອົງການກວດກາພາຍໃນ;
2. ອົງການກວດກາພາຍນອກ.

**ມາດຕາ 50 ອົງການກວດກາພາຍໃນ**

ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານອະໄພຍະໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງລັດຖະບັນຍັດສະບັບນີ້.

ການກວດກາພາຍໃນ ແມ່ນ ການກວດກາຕາມສາຍຕັ້ງຂອງຄະນະກຳມະການອະໄພຍະໂທດ. ການກວດກາພາຍໃນ ມີຈຸດປະສົງກວດກາການເຄື່ອນໄຫວຂອງຄະນະກຳມະການອະໄພຍະໂທດ ແຕ່ລະລະດັບ ແລະ ໜ່ວຍງານທີ່ກ່ຽວຂ້ອງກ່ຽວກັບວຽກງານອະໄພຍະໂທດ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 51 ອົງການກວດກາພາຍນອກ**

ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ.

ການກວດກາພາຍນອກ ດຳເນີນໂດຍສະພາແຫ່ງຊາດ ແນໃສ່ກວດກາການປະຕິບັດໜ້າທີ່ ຂອງຄະນະກຳມະການອະໄພຍະໂທດ ແລະ ໜ່ວຍງານທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ລັດຖະບັນຍັດ ວ່າດ້ວຍການໃຫ້ອະໄພຍະໂທດ ໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ ແລະ ຍຸຕິທຳ.

## ພາກທີ IX
## ງົບປະມານ ແລະ ຕາປະທັບຂອງຄະນະກຳມະການອະໄພຍະໂທດ

### ມາດຕາ 52 ງົບປະມານ ຂອງຄະນະກຳມະການອະໄພຍະໂທດ

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານອະໄພຍະໂທດມີປະສິດທິພາບນັ້ນໃຫ້ຄະນະກຳມະການອະໄພຍະໂທດ ມີງົບປະມານສະເພາະ.

ງົບປະມານ ຂອງຄະນະກຳມະການອະໄພຍະໂທດລະດັບຊາດ ມອບໃຫ້ກອງເລຂາຄະນະກຳມະການອະໄພຍະໂທດ ລະດັບຊາດ ໂດຍແມ່ນອີງການໄອຍະການປະຊາຊົນສູງສຸດ ເປັນຜູ້ຂຶ້ນແຜນງົບປະມານເພື່ອສະເໜີຕໍ່ລັດຖະບານພິຈາລະນາອະນຸມັດ.

ງົບປະມານ ຂອງຄະນະກຳມະການອະໄພຍະໂທດ ລະດັບກະຊວງ, ແຂວງມອບໃຫ້ກະຊວງ, ແຂວງ, ນະຄອນຫຼວງ ເປັນຜູ້ຂຶ້ນແຜນງົບປະມານໃນຂັ້ນຂອງຕົນ.

### ມາດຕາ 53 ຕາປະທັບ ຂອງຄະນະກຳມະການອະໄພຍະໂທດ

ຄະນະກຳມະການອະໄພຍະໂທດແຕ່ລະລະດັບມີຕາປະທັບສະເພາະຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານການເຄື່ອນໄຫວວຽກງານທາງການດັ່ງນີ້:

- ຕາປະທັບຂອງ ຄະນະກຳມະການອະໄພຍະໂທດລະດັບຊາດ ເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບວົງມົນເບື້ອງເທິງຂຽນວ່າ: ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ, ເບື້ອງລຸ່ມຂຽນວ່າ: ຄະນະກຳມະການອະໄພຍະໂທດ ລະດັບຊາດ;
- ຕາປະທັບຂອງ ຄະນະກຳມະການອະໄພຍະໂທດ ລະດັບກະຊວງ, ແຂວງໃຫ້ຖືເອົາຕາປະທັບຂອງກະຊວງ, ແຂວງ, ນະຄອນຫຼວງ ໃນເວລາເຊັນຊື່ ແມ່ນໃຫ້ມີທັງຕຳແໜ່ງດ້ານລັດ ແລະ ຄະນະກຳມະການອະໄພຍະໂທດ;
- ຕາປະທັບຂອງ ກອງເລຂາຄະນະກຳມະການອະໄພຍະໂທດລະດັບຊາດເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ຂອບວົງມົນເບື້ອງເທິງຂຽນວ່າ: ຄະນະກຳມະການອະໄພຍະໂທດລະດັບຊາດ, ເບື້ອງລຸ່ມຂຽນວ່າ: ກອງເລຂາ;
- ຕາປະທັບ ຂອງຄະນະກຳມະການອະໄພຍະໂທດລະດັບຊາດ ມອບໃຫ້ກອງເລຂາຄະນະກຳມະການອະໄພຍະໂທດລະດັບຊາດ ເປັນຜູ້ຄຸ້ມຄອງຮັກສາ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 54 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນການປະຕິບັດລັດຖະບັນຍັດວ່າດ້ວຍການໃຫ້ອະໄພຍະໂທດ ດ້ວຍຄວາມຕັ້ງໜ້າ ແລະ ມີຜົນສຳເລັດຕົວຈິງໃນໜ້າທີ່ວຽກງານ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ອື່ນຕາມລະບຽບການ.

### ມາດຕາ 55 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລັດຖະບັນຍັດສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 56 ວັນອະໄພຍະໂທດ**

ວັນອະໄພຍະໂທດຫຼຸດຜ່ອນໂທດ ແລະ ປ່ອຍຕົວ ໃຫ້ຖືເອົາວັນຊາດ 2 ທັນວາ ຍົກເວັ້ນນັກໂທດທີ່ຖືກລົງໂທດປະຫານຊີວິດແມ່ນໃຫ້ປະຕິບັດນະໂຍບາຍດັ່ງກ່າວ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນປະທານປະເທດອອກລັດຖະດຳລັດ ເປັນຕົ້ນໄປ.

**ມາດຕາ 57 ການຈັດຕັ້ງປະຕິບັດ**

ຄະນະກຳມະການອະໄພຍະໂທດລະດັບຊາດ, ກະຊວງ, ແຂວງ ແລະ ພາກສ່ວນອື່ນທີ່ກ່ຽວ ຂ້ອງເປັນຜູ້ຈັດຕັ້ງປະຕິບັດ ລັດຖະບັນຍັດ ສະບັບນີ້.

**ມາດຕາ 58 ຜົນສັກສິດ**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ໄດ້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ